ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 0066 /ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 23 ຕຸລາ 2019

# ແຈ້ງການ

**ເຖິງ:** ທ່ານ ຜູ້ອຳນວຍການບໍລິສັດຈົດທະບຽນໃໝ່ໃນຕະຫຼາດຫຼັກຊັບລາວ.

**ເລື່ອງ:** ພິຈາລະນາແຕ່ງຕັ້ງບໍລິສັດຫຼັກຊັບເພື່ອໃຫ້ຄຳແນະນຳແກ່ຕົນ ພາຍຫຼັງການຈົດທະບຽນໃນຕະຫຼາດຫຼັກຊັບລາວ.

- ອີງຕາມຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013;
- ອີງຕາມລະບຽບວ່າດ້ວຍ ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ ສະບັບເລກທີ 002/ຄຄຊ, ລົງວັນທີ 24 ກໍລະກົດ 2013.

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຂໍແຈ້ງມາຍັງບໍລິສັດຈົດທະບຽນໃໝ່ໃນຕະຫຼາດຫຼັກຊັບລາວ ຊາບທົ່ວເຖິງກັນວ່າ ເພື່ອຮັບປະກັນການເຄື່ອນໄຫວວຽກງານຂອງຕົນໃຫ້ມີປະສິດທິພາບ ແລະ ສອດຄ່ອງຕາມລະບຽບການກ່ຽວກັບວຽກງານຫຼັກຊັບ ເປັນຕົ້ນ: ການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນ, ການລາຍງານ ແລະ ການເປີດເຜີຍຂໍ້ມູນ, ໂຄງປະກອບດ້ານບຸກຄະລາກອນຂອງ ສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ, ການດຳເນີນລາຍການທີ່ກ່ຽວພັນ ແລະ ເປັນທີ່ປຶກສາດ້ານອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ສະນັ້ນ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈຶ່ງຂໍສະເໜີມາຍັງບັນດາບໍລິສັດຈົດທະບຽນໃໝ່ໃນຕະຫຼາດຫຼັກຊັບລາວ ພິຈາລະນາແຕ່ງຕັ້ງບໍລິສັດຫຼັກຊັບ ເພື່ອຊ່ວຍໃຫ້ຄຳແນະນຳຕໍ່ບັນຫາທີ່ໄດ້ກ່າວມາຂ້າງເທິງໃຫ້ແກ່ບໍລິສັດຕົນ ໃນໄລຍະຕົ້ນຂອງການຈົດທະບຽນໃນຕະຫຼາດຫຼັກຊັບລາວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມຄວາມເໝາະສົມ.

**ຫົວໜ້າສຳນັກງານ**

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານ ຄຄຊ

**ສາຍສະໝອນ ຈັນທະຈັກ**